ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 3258/ທຄຕລ.2024
ນະຄອນຫຼວງວຽງຈັນ, ວັນທີ: 19 SEP 2024

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາ ບໍລິສັດ ຮັບຈັດງານ (Organizer) ຢູ່ພາຍໃນ ສປປ ລາວ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາ ຮັບຈັດງານຄົບຮອບ 35 ປີ ທຄຕລ;

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາ ບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນລາຄາ ຮັບເໝົາຈັດງານ ສະເຫຼີມສະຫຼອງ ທຄຕລ ຄົບຮອບ 35 ປີ:

- ມື້ຈັດງານ ວັນສຸກ, ທີ 08/11/2024, ສະຖານທີ່: ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.
- ການຈັດງານ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| **I** | **ໂຄງສ້າງ ແລະ ລະບົບ ແສງ ສີ ສຽງ** | | |
| 1 | ເນັ້ນການອອກແບບໃຫ້ມີຄວາມທັນສະໄໝ ແລະ Digital | - | |
| 2 | ຕົກແຕ່ງທາງເຂົ້າ ແລະ ໜ້າງານໃຫ້ມີຈຸດເດັ່ນບົ່ງບອກເຖິງງານ | - | ໃສ່ປ້າຍ J-flag … |
| 3 | ມີຈຸດລົງທະບຽນ ດ້ານນອກ ທາງເຂົ້າງານ | - | |
| 4 | ສຳລັບການລົງທະບຽນ: ໃຫ້ເປັນແບບ (Online ຫຼື Electronic) | - | |
| 5 | ປູພົມທາງຍ່າງ | - | |
| 6 | ໃຫ້ມີທາງເຂົ້າດຽວ ແລະ ອີກ 1 ທາງອອກ (ຕໍ່ໜ້າຫ້ອງຈັດງານ) ແມ່ນໃຫ້ເປີດໄດ້ຫລັງ 20:00 ໂມງ ເປັນຕົ້ນໄປ | - | ແຕ່ງສາກກັ້ນທາງອອກທີ່ຢູ່ຕໍ່ໜ້າຫ້ອງຈັດງານລ້ຽງໄວ້ |
| 7 | ເສີມຈໍ LED ເທິງເວທີທັງ 2 ຂ້າງ | 2 | |
| 8 | ມີກິດປຸ່ມ ສະເຫຼີມສະຫຼອງ 35 ປີ (Gimmick) | 1 | (ເປັນລັກສະນະໜ່ວຍມົນໃຫຍ່ ຫຼື ລູກໜ່ວຍໂລກປະມານ 4-5 ທ່ານ) |
| 9 | ສາກຕົກແຕ່ງ ທາງເຂົ້າ ແລະ ພາຍໃນງານ | - | |
| 10 | ສາກຖ່າຍຮູບໜ້າງານ (BackDrop) | 1 | |
| 11 | ຈຸດສະແດງຜົນງານ ແບ່ງເປັນ 3 ໄລຍະ | 3 | ຜະສົມຜະສານຈໍ LCD ແລະ ສື່ສິ່ງພິມ |
| 12 | ຊຸ້ມວາງສະແດງລາງວັນ ຫຼື ສັງລວມຜົນງານພົ້ນເດັ່ນຂອງ ທຄຕລ | 1 | |
| 13 | ເຄົາເຕີ ຫຼື ຈຸດແຈກເຄື່ອງທີ່ລະນຶກ | 1 | |
| 14 | ປ້າຍ Prop | 5 | |
| 15 | Photo Frame | 1 | |
| 16 | ອອກແບບບັດເຊີນ | 1 | |
| 17 | ລະບົບໄຟ ແສງ ສີ | 1 | ຕົກແຕ່ງໜ້າງານ ແລະ ພາຍໃນງານໃຫ້ມີຄວາມອະລັງການ |
| 18 | ທີມງານຄວບຄຸມ ລະບົບແສງ, ສີ, ສຽງ | 1 | |

| | | | |
|---|---|---|---|
| **II** | **ທີມງານຖ່າຍພາບນິ້ງ ແລະ Video** | - | |
| 1 | Live ບັນຍາກາດງານຂຶ້ນຈໍ | 1 | |
| 2 | ຖ່າຍຮູບໜ້າງານ, ຮູບພາຍໃນງານ ແລະ ຖ່າຍວິດີໂອພາບບັນຍາກາດ ແລະ Highlight ຂອງງານ | 1 | |
| **III** | **ທີມຄວບຄຸມງານ, ຈັດຄິວ ...** | - | |

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

***ເອກະສານຊອງທີ 1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດທີ່ກ່ຽວຂ້ອງ ຢ່າງໜ້ອຍ 2 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນປີ 2023 ແລະ ເອກະສານກ່ຽວກັບຜົນງານຜ່ານມາຂອງບໍລິສັດ.
2. ສາມາດຍື່ນເອກະສານຂ້າງເທິງໄດ້ ນັບຈາກວັນນີ້ຈົນເຖິງ ວັນຈັນ, ວັນທີ 30/09/2024 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ Email: procurement@bcel.com.la.
3. ຜູ້ສະໜອງຕ້ອງມານຳສະເໜີຮູບແບບການຈັດງານ ໃນວັນພຸດ, ທີ 02/10/2024.

***ເອກະສານຊອງທີ 2 (ປິດຊອງ)**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ແລະ ຖືກຄັດເລືອກຈາກຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມໃນ ວັນພຸດ, ທີ 09/10/2024 ເວລາ 09:00 ໂມງ, ທີ່ຫ້ອງປະຊຸມຊັ້ນ 3 ຕຶກ C ສຳນັກງານໃຫຍ່ ທຄຕລ.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນ **ສະກຸນເງິນກີບ**.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ ສປປ ລາວ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 01/11/2024) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ/ແຊັກດັ່ງກ່າວຄືນ.

**ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

➢ **ເງື່ອນໄຂການປະມູນສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດ.
- ການຊຳລະແມ່ນຈ່າຍເງິນ 02 ງວດ: ພາຍຫຼັງເຊັນສັນຍາທັງສອງຝ່າຍສຳເລັດ ຊຳລະ 15% ແລະ ສຳເລັດວຽກແມ່ນຊຳລະອີກ 85%.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

**ນ. ພູແສງທອງ ອານຸລັກຄຳ**

ຕິດຕໍ່ພົວພັນ:
021 213200 ຕໍ່ 417
020 28 828 222 (ໂມງລັດຖະການ)